ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0060--- /ກງ

ນະຄອນຫລວງວຽງຈັນ, ວັນທີ 11 JAN 2018

ເຖິງ : ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທຸກໆຂັ້ນ, ພະນັກງານ, ທະຫານ, ຕຳຫລວດ, ປະຊາຊົນ, ຊາວຕ່າງດ້າວ, ຊາວຕ່າງປະເທດ ທີ່ເຄື່ອນໄຫວດຳເນີນທຸລະກິດ ແລະ ດຳລົງຊີວິດ ຢູ່ໃນດິນແດນ ສປປ ລາວ.

ເລື່ອງ: ການຈັດຕັ້ງປະຕິບັດອາກອນຊົມໃຊ້ຂອງບາງປະເພດ ສິນຄ້າ ແລະການບໍລິການ ຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015.

- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 019/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 023/ປປທ, ລົງວັນທີ 28 ມັງກອນ 2016.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດພັນທະອາກອນ ຖືກຕ້ອງ ແລະສອດຄ່ອງ ຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນໄດ້ກຳນົດໄວ້ ໂດຍສະເພາະແມ່ນອາກອນຊົມໃຊ້ ຊຶ່ງມີບາງປະເພດ ສິນຄ້າ ແລະບໍລິການ ໄດ້ກຳນົດອັດຕາເພີ່ມຂຶ້ນເປັນໄລຍະ, ທັງນີ້ກໍເພື່ອເປັນການທົດແທນອັດຕາພາສີທີ່ນັບມື້ນັບຫລຸດລົງ.

ສະນັ້ນ, ເພື່ອສືບຕໍ່ປະຕິບັດພັນທະອາກອນຊົມໃຊ້ໃຫ້ຖືກຕ້ອງ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານເພື່ອຊາບວ່າ ອາກອນຊົມໃຊ້ຂອງປະເພດ ນ້ຳມັນເຊື້ອໄຟ, ເຫລົ້າ ຫລື ເຄື່ອງດື່ມທີ່ມີທາດເຫລົ້າ, ປະເພດຢາສູບ ແລະການບໍລິການດ້ານການບັນເທີງ ໃຫ້ປະຕິບັດຕາມອັດຕາທີ່ໄດ້ກຳນົດໄວ້ເປັນແຕ່ລະໄລຍະ ຕາມ ມາດຕາ 20 ຂອງ ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ຢ່າງເຂັ້ມງວດ ໂດຍເລີ່ມແຕ່ ວັນທີ 1 ມັງກອນ 2018 ເປັນຕົ້ນໄປ ( ອັດຕາອາກອນຊົມໃຊ້ ທີ່ໄດ້ກຳນົດຢູ່ໃນກົດໝາຍ ມີຢູ່ຕາຕະລາງຄັດຕິດມາພ້ອມນີ້ ). ແຕ່ເນື່ອງຈາກວ່າສິນຄ້າປະເພດນ້ຳມັນເຊື້ອໄຟ ເປັນສິນຄ້າທີ່ກຳນົດລາຄາຕາມໂຄງສ້າງ ຈຶ່ງໃຫ້ຈັດຕັ້ງປະຕິບັດພາຍຫລັງໄດ້ປັບໂຄງສ້າງລາຄາສຳເລັດແລ້ວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີກະຊວງການເງິນ